| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້ |
| **ປະເພດເອກະສານ** | ໃບອະນຸຍາດດຳເນີນທຸລະກິດ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 23.02.2024 |
| **ພາກສ່ວນຮັບຜິດຊອບ** | ກົມແຜນການ ແລະ ການຮ່ວມມື |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ບໍລິສັດ ຫຼື ວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດໂກຕ້ອງຕາມກົດໝາຍ ໂດຍຜ່ານ ກະຊວງອຸດສາຫະກຳ ແລະ ການຄ້າ |

| | |
|---|---|
| **ເງື່ອນໄຂໃນການຂໍເອກະສານ** | I. ສຳລັບການລົງທຶນ ໃນກິດຈະການ ການລົງທຶນທົ່ວໄປ “ ກິດຈະການ<br>ບໍ່ຢູ່ໃນບັນຊີຄວບຄຸມ “ 1. ໃບຄຳຮ້ອງຂໍໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ<br>ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມ<br>ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້;2.<br>ໃບທະບຽນວິສາຫະກິດ;3. ກົດລະບຽບຂອງບໍລິສັດ<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ);4. ບົດວິພາກເສດຖະກິດ-<br>ເຕັກນິກໂຄງການ/ບົດສະເໜີໂຄງການ ຫຼື ແຜນການເຄື່ອນໄຫວດຳເນີນທຸລະກິດ<br>ສຳລັບກິດ ຈະການເຄື່ອນໄຫວດ້ານບໍລິການທີ່ປຶກສາ ແລະ ບໍລິການການຄ້າ ຂາອອກ-<br>ຂາເຂົ້າທົ່ວໄປ ເພື່ອຈຳໜ່າຍ.II. ສຳລັບການລົງທຶນ ໃນບັນຊີກິດຈະການຄວບຄຸມ1.<br>ໃບຄຳຮ້ອງ ຂໍໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້<br>(ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມຄຳຮ້ອງ<br>ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້.2.<br>ໃບອະນຸຍາດລົງທຶນ.3. ໃບທະບຽນວິສາຫະກິດ. 4. ໃບຢັ້ງຢືນທີ່ດິນ ແລະ/ຫຼື<br>ສັນຍາສິ່ງເສີມ ໃນຮູບແບບ 2+3<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).5. ບົດວິພາກເສດຖະກິດ-ເຕັກນິກ<br>ໂຄງການ ແລະ ລວມທັງໃບຢັ້ງຢືນຮັບຮອງ<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນກຕ້ອງຄົບຖ້ວນແລ້ວ).6.<br>ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ (ESIA) ຫຼື<br>ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE); ຫຼື<br>ສ້າງແຜນການຄຸ້ມຄອງແລະຕິດຕາມກວດກາດ້ານສິ່ງແວດລ້ອມ (EMMP) ຫຼື<br>ແຜນການຄຸ້ມຄອງແລະຕິດຕາກວດກາດ້ານສັງຄົມ (SMMP)<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຮັບຮອງທຶກຕ້ອງຄົບຖ້ວນ ຈາກ<br>ຂະແໜງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວ).III.<br>ສຳລັບການລົງທຶນ ໃນກິດຈະການບັນຊີສຳປະທານ1. ໃບຄຳຮ້ອງ<br>ຂໍໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4<br>ຈຳນວນ 02 ໃບ ຄັດຕິດມາພ້ອມ) ຕາມແບບຟອມຄຳຮ້ອງ ກົມແຜນການ ແລະ<br>ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້.2. ໃບອະນຸຍາດລົງທຶນ.3.<br>ໃບທະບຽນວິສາຫະກິດ. 4. ສັນຍາວ່າດ້ວຍການພັດທະນາໂຄງການ<br>PDA/ສັນຍາສຳປະທານກັບລັດຖະບານ CA,<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).5. ສັນຍາເຊົ່າ ແລະ<br>ສຳປະທານທີ່ດິນລັດ ຮູບແບບ 1+4 ລວມທັງບົດສຳຫຼວດເນື້ອທີ່ດິນ ຫຼື ໃບຢັ້ງຢືນທີ່ດິນ<br>ແລະ/ຫຼື ສັນຍາສິ່ງເສີມ ໃນຮູບແບບ 2+3<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).6. ບົດວິພາກເສດຖະກິດ-ເຕັກນິກ<br>ໂຄງການ ແລະ ລວມທັງໃບຢັ້ງຢືນຮັບຮອງ<br>(ທີ່ໄດ້ຮັບການອະນຸມັດຢັ້ງຢືນຖືກຕ້ອງຄົບຖ້ວນແລ້ວ).7.<br>ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ (ESIA) ຫຼື<br>ບົດລາຍງານການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ (IEE); ຫຼື<br>ສ້າງແຜນການຄຸ້ມຄອງແລະຕິດຕາມກວດກາດ້ານສິ່ງແວດ ລ້ອມ (EMMP) ຫຼື<br>ແຜນການຄຸ້ມຄອງແລະຕິດຕາກວດກາດ້ານສັງຄົມ (SMMP),<br>ທີ່ໄດ້ຮັບການອະນຸມັດຢັ້ງຢືນຮັບຮອງຖືກຕ້ອງຄົບຖ້ວນ ຈາກ<br>ຂະແໜງການຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ແລ້ວ. |

## ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ

| ຊື່ | ເລກທີ | ລົງວັນທີ | ໝາຍເຫດ |
|---|---|---|---|
| ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ (ສະບັບປັບປຸງ) | ສພຊ | 17.07.2023 | |
| ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ (ສະບັບປັບປຸງ) | ສພຊ | 11.11.2016 | |
| ກົດໝາຍວ່າດ້ວຍ ການປະມົງ | 03/ສພຊ | 07.09.2009 | |
| ຂໍ້ຕົກລົງ ວ່າດ້ວຍ ກົນໄກຄຸ້ມຄອງການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ | ກປ | 26.10.2022 | |
| ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) | ສພຊ | 13.06.2019 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 5 | ຍື່ນເອກະສານມາຍັງ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້ |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | I. ສຳລັບການລົງທຶນ ໃນກິດຈະການ ການລົງທຶນທົ່ວໄປ " ກິດຈະການ<br>ບໍ່ຢູ່ໃນບັນຊີຄວບຄຸມ " 1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ<br>ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ) ຕາມແບບຟອມຄຳຮ້ອງ<br>ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້;2.<br>ບົດສະຫຼຸບການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ<br>(ຕາມຮ່າງບົດສະຫຼຸບລາຍງານ ຂອງກົມແຜນການ ແລະ ການຮ່ວມມື, ກະສິກຳ ແລະ<br>ປ່າໄມ້ ໂດຍມີການຢັ້ງຢືນຮັບຮູ ຈາກພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ,<br>ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ກ່ຽວຂ້ອງ);3.<br>ໃບທະບຽນວິສາຫະກິດ;4. ໃບທະບຽນອາກອນ ຫຼື<br>ໃບຢັ້ງຢືນການມອບພັນທະເສຍອາກອນ;5. ໃບອະນຸຍາດດຳເນີນກິດຈະການກະສິກຳ<br>ແລະ ປ່າໄມ້ (ປີຜ່ານມາ).ໝາຍເຫດ: 1.<br>ໃນກໍລະນີບໍລິສັດໄດ້ໄປເຄື່ອນໄຫວກິດຈະການຢູ່ຫຼາຍແຂວງ<br>ແມ່ນໃຫ້ເຮັດບົດສະຫຼຸບສະເພາະຂອງແຕ່ລະແຂວງ<br>ໂດຍຜ່ານການຢັ້ງຢືນຮັບຮູ້ຢ່າງຖືກຕ້ອງ ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ<br>ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ<br>ບ່ອນທີ່ໄດ້ມີການດຳເນີນກິດຈະ ການໂຄງການນັ້ນ;<br>ສຳລັບກິດຈະການເຄື່ອນໄຫວດ້ານບໍລິການທີ່ປຶກສາ ແລະ ບໍລິການການຄ້າຂາອອກ-<br>ຂາເຂົ້າທົ່ວໄປເພື່ອຈຳໜ່າຍ ແມ່ນບໍ່ໄດ້ເຊັນຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ<br>ປ່າໄມ້ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ<br>(ແມ່ນໃຫ້ຄັດຕິດເອກະສານທີ່ກ່ຽວຂ້ອງຄົບຖ້ວນ ໃນການນຳເຂົ້າ-ສົ່ງອອກ ມາພ້ອມ).2.<br>ໃນກໍລະນີບໍ່ມີບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ ແລະ<br>ບໍ່ມີການຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, ພະແນກກະສິກຳ<br>ແລະ ປ່າໄມ້ ຂັ້ນແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ. ກົມແຜນການ ແລະ ການຮ່ວມມື<br>ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງສົມທົບກັບ ກົມ, ພາກສ່ວນທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ<br>ແລະ ບໍລິສັດ ເພື່ອພ້ອມກັນລົງເກັບກຳຂໍ້ມູນ ຕິດຕາມ ກວດກາ<br>ການເຄື່ອນໄຫວດຳເນີນກິດຈະການຕົວຈິງແລ້ວ ສ້າງບົດບັນທຶກຮ່ວມກັນ<br>ໂດຍມີການຢັ້ງຢືນຢ່າງຖືກຕ້ອງ ເພື່ອໃຊ້ເປັນບ່ອນອີງ<br>ນຳສະເໜີລາຍງານຂັ້ນເທິງໃນການພິຈາລະນາຕໍ່ໃບອະນຸຍາດ.II. ສຳລັບການລົງທຶນ<br>ໃນບັນຊີກິດຈະການຄວບຄຸ້ມ1. ໃບຄຳຮ້ອງຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກະສິກຳ<br>ແລະ ປ່າໄມ້ (ພ້ອມດ້ວຍຮູບຂະໜາດ 3x4 ຈຳນວນ 02 ໃບ) ຕາມແບບຟອມຄຳຮ້ອງ<br>ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ ປ່າໄມ້.2.<br>ບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມາ<br>(ຕາມຮ່າງບົດສະຫຼຸບລາຍງານ ກົມແຜນການ ແລະ ການຮ່ວມມື, ກະຊວງກະສິກຳ ແລະ<br>ປ່າໄມ້ ໂດຍມີການຢັ້ງຢືນຮັບຮູ້ ຈາກ ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ,<br>ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ທີ່ກ່ຽວຂ້ອງ).3.<br>ໃບຢັ້ງຢືນທີ່ດິນ ແລະ/ຫຼື ສັນຍາສົ່ງເສີມ ໃນຮູບແບບ 2+3,<br>ທີ່ໄດ້ຮັບການອະນຸມັດຢັ້ງຢືນທີ່ຖືກຕ້ອງຄົບຖ້ວນແລ້ວ<br>(ໃນກໍລະນີຖ້າມີການດັດແກ້ປັບປຸງ).4. ໃບອະນຸຍາດລົງທຶນ.5.<br>ໃບທະບຽນວິສາຫະກິດ.6. ໃບທະບຽນອາກອນ ຫຼື<br>ໃບຢັ້ງຢືນການມອບພັນທະເສຍອາກອນ.7. ໃບອະນຸຍາດດຳເນີນກິດຈະການກະສິກຳ<br>ແລະ ປ່າໄມ້ (ປີຜ່ານມາ).ໝາຍເຫດ: 1).<br>ໃນກໍລະນີບໍລິສັດໄດ້ໄປເຄື່ອນໄຫວກິດຈະການຢູ່ຫຼາຍແຂວງ<br>ແມ່ນໃຫ້ເຮັດບົດສະຫຼຸບສະເພາະຂອງແຕ່ລະແຂວງ ໂດຍຜ່ານການຢັ້ງຢືນຮັບຮູ້ຈາກ<br>ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້<br>ຂັ້ນແຂວງ, ນະຄອນຫຼວງ ບ່ອນທີ່ໄດ້ມີການດຳເນີນກິດຈະການໂຄງການນັ້ນ.2).<br>ໃນກໍລະນີບໍລິສັດບໍ່ມີບົດສະຫຼຸບລາຍງານການເຄື່ອນໄຫວດຳເນີນກິດຈະການໃນປີຜ່ານມ<br>ແລະ ບໍ່ມີການຢັ້ງຢືນຮັບຮູ້ຈາກ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, |

| ຄ່າທຳນຽມສຳລັບການຍື່ນຂໍເອກະສານ | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 0.00 | 0.00 |
| **Comments** | The person responsible for calculating and collecting fees is the Budget Department, Ministry Office, Ministry of Agriculture and Forestry | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | |

| ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 0.00 | 0.00 | 0.00 |
| **ຄຳເຫັນ** | ຜູ້ຮັບຊອບໃນການຄິດໄລ່ ແລະ ເກັບຄ່າທຳນຽມ ແມ່ນ ພະແນກງົບປະມານ, ຫ້ອງການກະຊວງ, ກະຊວງກະສິກຳ ແລະ ປ່າໄມ້ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |